ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ 221 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 07 ກັນຍາ 2026

ໜັງສືແຈ້ງເຊີນປະມູນ

ເຖິງ: ບັນດາວິສາຫະກິດ ແລະ ບໍລິສັດ ທັງຫຼາຍ.

ເລື່ອງ: ເຂົ້າຮ່ວມການປະມູນການສະໜອງເຄື່ອງຟອກອາກາດ ໃຫ້ທະນາຄານແຫ່ງ ສປປ ລາວ.

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງ ທຫລ, ສະບັບເລກທີ 601/ທຫລ, ລົງວັນທີ 07 ກໍລະກົດ 2026;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການປະມູນການສະໜອງຈັກໄຟຟ້າສຳຮອງ ແລະ ເຄື່ອງຟອກອາກາດ ຂອງ ໂຮງພິມທະນະບັດ, ສະບັບເລກທີ 787/ທຫລ, ລົງວັນທີ 21 ສິງຫາ 2026.

ຫ້ອງການ, ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍຖືເປັນກຽດແຈ້ງມາຍັງບັນດາວິສາຫະກິດ ແລະ ບໍລິສັດທີ່ສະໜອງເຄື່ອງກ່ຽວຂ້ອງ ຊາບວ່າ: ທຫລ ມີຈຸດປະສົງຈະຈັດຊື້ເຄື່ອງຟອກອາກາດ ຈຳນວນ 8 ຊຸດ ເພື່ອຕິດຕັ້ງຢູ່ຕຶກອາຄານ ຂອງ ທຫລ ຊັ້ນ 1 ແລະ ຊັ້ນ 2.

ສະນັ້ນ, ທຫລ ຈຶ່ງແຈ້ງມາຍັງບັນດາວິສາຫະກິດ ແລະ ບໍລິສັດ ທີ່ສະໜອງເຄື່ອງດັ່ງກ່າວ ເຂົ້າຮ່ວມໃນການປະມູນ ໂດຍພາກສ່ວນກ່ຽວຂ້ອງທີ່ຈະເຂົ້າຮ່ວມຕ້ອງມີມາດຕະຖານ-ເງື່ອນໄຂ ເບື້ອງຕົ້ນ ດັ່ງລຸ່ມນີ້:

I. ໄລຍະທີ 1 ຂັ້ນຕອນຂາຍຊອງປະມູນ: ຜູ້ທີ່ຈະສາມາດຊື້ຊອງປະມູນໄດ້ຕ້ອງມີເງື່ອນໄຂຄົບຖ້ວນຄື:

1. ມີໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ທີ່ຂະແໜງການກ່ຽວຂ້ອງ ອອກອະນຸຍາດ ແລະ ນຳໃຊ້ໄດ້ໃນປັດຈຸບັນ;
2. ມີໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ 2025;
3. ມີໃບຢັ້ງຢືນຖານະການເງິນ ຫຼື ຍອດເຫຼືອເງິນຝາກໃນລະດັບດີ ຈາກທະນາຄານທຸລະກິດໃດໜຶ່ງ ແລະ ໃນລາຍງານ ບັນຊີສຳຮອງຢ້ອນຫຼັງ 3 ເດືອນ (ເດືອນ 6-8 ປີ 2026);
4. ມີປະສົບການໃນການດຳເນີນທຸລະກິດກ່ຽວຂ້ອງ ຫຼື ອື່ນໆ ທີ່ຕິດພັນ ຢ່າງໜ້ອຍ 3 ປີ ຂຶ້ນໄປ, ມີຜົນງານໃນການສະໜອງເຄື່ອງຟອກອາກາດໃນໄລຍະຜ່ານມາ ເພື່ອນຳສະເໜີຕໍ່ຄະນະກຳມະການກ່ຽວຂ້ອງ (ມີເອກະສານຢັ້ງຢືນມາພ້ອມ).

ສຳລັບມາດຕະຖານ ແລະ ຄຸນສົມບັດໃນການໃຊ້ງານຂອງເຄື່ອງຟອກອາກາດກ່ຽວຂ້ອງໄດ້ລະບຸຢູ່ໃນເອກະສານຊ້ອນທ້າຍຄັດຕິດມາພ້ອມນີ້.

ໝາຍເຫດ: ບໍລິສັດທີ່ຈະເຂົ້າຮ່ວມຊື້ຊອງປະມູນຕ້ອງປະກອບ ແລະ ສຳເນົາເອກະສານຕາມ 4 ລາຍການ ຂ້າງເທິງຢ່າງຄົບຖ້ວນ ແລະ ມີການຢັ້ງຢືນຈາກຜູ້ອຳນວຍການບໍລິສັດກ່ຽວຂ້ອງມາພ້ອມ ທຫລ ຈຶ່ງຈະຂາຍຊອງປະມູນໃຫ້ໄດ້. ສຳລັບມູນຄ່າຊື້ຊອງປະມູນ ແມ່ນລາຄາ 2,000,000 ກີບ/ຊອງ, ຊຶ່ງມູນຄ່າດັ່ງກ່າວຈະບໍ່ຖືກສົ່ງຄືນ ບໍ່ວ່າກໍລະນີໃດໆ.

II. ໄລຍະທີ 2 ຂັ້ນຕອນການປະມູນ: ຜູ້ທີ່ໄດ້ຊື້ຊອງປະມູນແລ້ວ ຕ້ອງປະຕິບັດຕາມຂັ້ນຕອນການ ປະມູນຄື:

1. ຕ້ອງປະກອບເອກະສານປະມູນໃຫ້ຄົບຖ້ວນຕາມທີ່ລະບຸໄວ້ໃນເອກະສານ (TOR);

2. ສຳລັບມື້ເປີດຊອງປະມູນ ທຫລ ຈະແຈ້ງການຕາມພາຍຫຼັງ ແລະ ຜູ້ເຂົ້າຮ່ວມການປະມູນ ຕ້ອງຖືຊອງປະມູນ (ຊອງລາຄາ ແລະ ເອກະສານກ່ຽວຂ້ອງຕາມເງື່ອນໄຂທີ່ກຳນົດໄວ້ຂອງຕົນມາພ້ອມ) ໃນມື້ເປີດຊອງຕົວຈິງ ໂດຍຈະເປີດຊອງປະມູນລາຄາ ຂອງແຕ່ລະພາກສ່ວນພ້ອມກັນ ຊ່ອງໜ້າກັບຄະນະກຳມະການກ່ຽວຂ້ອງ;

3. ຖ້າໄດ້ຮັບການຄັດເລືອກ ຈະໄດ້ເຊັນສັນຍາຮ່ວມວຽກກັນ.

ບັນດາວິສາຫະກິດ ແລະ ບໍລິສັດ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນ ສາມາດພົວພັນຊື້ຊອງປະມູນ ຢູ່ພະແນກບໍລິຫານ, ຫ້ອງການ ທຫລ, ຕັ້ງຢູ່ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ໝາຍເລກໂທລະສັບ 021 241 268 ເລີ່ມແຕ່ວັນທີ....8..ກັນຍາ 2026 ຫາ...5..ຕຸລາ 2026.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາວິສາຫະກິດ ແລະ ບໍລິສັດ ເພື່ອຊາບ ແລະ ເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ
ພານຸສັກ ແກ່ນວົງພະຈັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
ທະນາຄານແຫ່ງ ສປປ ລາວ
ໂຮງພິມທະນະບັດ

ເລກທີ 498 /ຮພທ
ນະຄອນຫຼວງວຽງຈັນ, ວັນທີ 4 ກັນຍາ 2026

ໜັງສືຢັ້ງຢືນສະເປັກເຄື່ອງຟອກອາກາດ

1. ລາຍລະອຽດສະເປັກໂມເດວເຄື່ອງຟອກອາກາດ

ລຳດັບ	ລາຍການ	ຮຸ່ນ / Model	ຈຳນວນ	ການໄຫຼວຽນຂອງອາກາດ (Air Flow (CFM))	ພື້ນທີ່ຮັບອາກາດ (m^2)	ກ່ອງກອງ Filter Box	ຕົວກອງຄາບອນ PM2.5 + Carbon Filter
1	ຫ້ອງຈັກຕັດ (ຊັ້ນ 2)	(VAM350HVE (Daikin)	1	170	35	✓	✓
2	ຫ້ອງຈັກຕັດ (ຊັ້ນ 1)	(VAM500HVE (Daikin)	2	243	50	✓	✓
3	ຫ້ອງຕັດໄຈ້ (ຊັ້ນ 2)	VAM-1000GVBI (Daikin)	2	988	204	✓	✓
4	ພະແນກການພິມ	VAM-1500GJVE (Daikin)	2	1284	265	✓	✓
5	ພະແນກການພິມ	VAM-06 (VAM350HVE)	1	195	40	✓	✓
6	ກອງອາກາດ	Filter Box-01-0 (BAF429A20AC)	8	Filter Box Include PM 2.5 + Carbon		3*60*60cm	PM2.5 + Carbon Filter
7	ກອງອາກາດ	Filter Box-05 (BAF249A350)	8			3*60*60cm	PM2.5 + Carbon Filter

2. ລາຍການສະເປັກທໍ່ ແລະ ອຸປະກອນ

ລຳດັບ	ລາຍການ	ລາຍລະອຽດທໍ່ລົມ ແລະ ອຸປະກອນ
1	ທໍ່ pvc ຂາວ Ø 250	
2	ຂໍ້ງໍ 90 Ø 250	90° Elbow: PVC 90° Elbow, Ø250 mm
3	ຂໍ້ຕໍ່ຊື່ Ø 250	Straight Coupling: PVC Straight Coupling, Ø250 mm
4	ຂໍ້ຕໍ່ໜ້າແປນ Ø 250	Flange: PVC Flange, Ø250 mm
5	ເຫຼັກຢວງຮັດທໍ່ເຫຼັກພ້ອມເຫຼັກສາກແລະກຽວສະກາດແຂວນທໍ່	Pipe Support Assembly: Steel Pipe Clamp, Steel Angle Support, and Threaded Rod for Ø250 mm pipe support.

ສແກນດ້ວຍ CamScanner

3. ລາຍລະອຽດຄຸນສົມບັດ ແລະ ມາດຕະຖານເຄື່ອງຟອກອາກາດ

• ເປັນເຄື່ອງຟອກອາກາດ ແລະ ລະບາຍອາກາດ ຄຸມພາບໃຊ້ມາດຕະຖານ PM2.5 • ຟອກອາກາດທາງນອກ ແລະ ທາງໃນໃຫ້ບໍລິສຸດປ້ອງກັນຝຸ່ນ ແລະ ກິ່ນພ້ອມເຄມີ • ມອດເຕີພັດລົມແບບ Cadiod • ລະດັບສຽງໃນການເຮັດງານ ຕ່ຳກວ່າ 100dB • ແຜງໄຟ LED ຕິດຕັ້ງສະຖານະ ເປີດ-ປິດ • ສາມາດເຮັດວຽກແບບຕໍ່ເນື່ອງ • ໃຊ້ຕົວກອງອາກາດ 100% ແບບ 2 ຊັ້ນ ແລະ ສາມາດກວດຈັບຝຸ່ນ PM2.5	• ເໝາະສຳລັບຕິດຕັ້ງໃນອາຄານໃຊ້ງານ ປະຊຸມ ແລະ ຫ້ອງຄວບຄຸມ • ຕິດຕັ້ງໃນໂຄງການຂະໜາດ 1 ຊັ້ນ, ຮອງຮັບການເຊື່ອມຕໍ່ສູງສຸດ 2 ໂຕ • ລະບົບຄວບຄຸມດ້ວຍຄອນເດນເຊີ Electrel CONDENSER

ຫົວໜ້າໂຮງພິມທະນະບັດ ທຫລ

ນະຄອນລີ ມະໂນທັມ

สแกนด้วย CamScanner